IRRI

# ສະຖາບັນຄົ້ນຄວ້າເຂົ້ານາໆຊາດ ປະຈໍາ ສປປ ລາວ




ພື້ນທີ່ຂອງ ສປປລາວ ຖືວ່າເປັນຕົ້ນ ກໍາເນີດຂອງເຂົ້າໜຽວ, ແລະ ເຂົ້າ ຊະນິດນີ້ຍັງກວມເອົາ 80% ຂອງ ການຊົມໃຊ້ພາຍໃນປະເທດອີກ. ເຂົ້າແມ່ນອາຫານຫຼັກປະຈໍາວັນ, ໂດຍມີ ການບໍລິໂພກເຂົ້າຕໍ່ ຫົວຄົນສູງທີ່ສຸດໃນ ໂລກໂດຍສະເລ່ຍປະມານ 160 ກິໂລກຼາມຕໍ່ປີ.

ການຂະຫຍາຍພື້ນທີ່ການຜະລິດທີ່ສໍາຄັນ ແລະ ການຮັບຮອງແນວພັນ ເຂົ້າທີ່ໄດ້ຮັບການປັບປຸງ, ປະເທດໄດ້ບັນລຸການກຸ້ມຕົນເອງດ້ານເຂົ້າ ແຫ່ງຊາດໃນປີ 1999, ສາມາດຜະ ລິດເຂົ້າໄດ້ຫຼາຍກວ່າ 2 ລ້ານໂຕນ ຕໍ່ປີ. ໃນປີ 2019, ພື້ນທີ່ການ ເກັບກ່ຽວຫຼາຍກວ່າ 840,000 ເຮັກຕາ ເຮັດຜົນຜະລິດໄດ້ 3,5 ລ້ານໂຕນ.




*ຮູບພາບ: ທ່ານ ດຣ. ນາງ ຈັນທະຄອນ ບົວລະພັນ ແລະ ທ່ານ ດຣ. ເພັດມະນີແສງ ຊ້າງໄຊຍະສານ, ນັກຄົ້ນຄວ້າ ແລະ ນັກປັບປຸງແນວພັນເຂົ້າປະເທດລາວ*

ການຮ່ວມມືກັນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ (ສປປ ລາວ) ແລະ ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ເລີ່ມຕົ້ນໃນປີ 1968, ແລະ ໃນຫຼາຍຊວງທົດສະວັດທີ່ຜ່ານມາຂອງການຮ່ວມມືໄດ້ຊ່ວຍຊຸກຍູ້ຂະແໜງການຜະລິດເຂົ້າຂອງປະເທດຕັ້ງແຕ່ລະດັບການຜະລິດກຸ້ມຕົນເອງໄປຈົນເຖິງການຜະລິດເປັນສິນຄ້າ ແລະ ສາມາດບັນລຸການກຸ້ມຕົນເອງດ້ານການຜະລິດເຂົ້າໄດ້ໃນປີ 1999.

ການທົດສອບແນວພັນເຂົ້າປັບປຸງຈາກການຄັດເລືອກ ແລະ ການປັບປຸງແນວພັນຂອງ IRRI ໄດ້ເຮັດວຽກໃນບັນດາປະເທດ ທີ່ພັດທະນາຕະຫຼອດຊຸມປີ 1970, ໂດຍມີການທົດລອງຜົນ ຜະລິດ ໃນຫຼາຍໆຈຸດຢ່າງເປັນລະບົບ ເຊິ່ງເລີ່ມຕົ້ນໃນປີ 1973. ຕາມດ້ວຍການເພີ່ມທະວີ ແລະ ການເຜີຍແຜ່ຫຼາຍໆສາຍພັນ ແລະ ແນວພັນຂອງ IRRI ໃຫ້ແກ່ຊາວກະສິກອນ.
ບົດບັນທຶກຄວາມເຂົ້າໃຈທໍາອິດລະຫວ່າງ ສປປ ລາວ ແລະ ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ແມ່ນໄດ້ເຊັນກັນໃນປີ 1987. ການຮ່ວມມືກັນນັບມື້ນັບເຂັ້ມແຂງຂຶ້ນເມື່ອໜ່ວຍງານຂອງສະວິດເພື່ອການພັດທະນາ ແລະ ການຮ່ວມມື (SDC)ໄດ້ສະໜັບສະໜູນໂຄງການການຄົ້ນຄວ້າ ແລະ ຝຶກອົບຮົມ ຮ່ວມກັບ IRRI ໃຫ້ແກ່ ສປປ ລາວ ແຕ່ປີ 1990 ເຖິງ 2007. ແກ່ນແທ້ຂອງໂຄງການຄືການພັດທະນາເຄືອຂ່າຍຄົ້ນຄວ້າວິໄຈເຂົ້າແຫ່ງຊາດ, ເຊິ່ງໃນປີ 1995 ໄດ້ລວມເອົາທຸກໆແຂວງໃນ ທົ່ວປະເທດ.

ໃນເດືອນຕຸລາ 2011, ລັດຖະບານແຫ່ງ ສປປ ລາວ ແລະ IRRIໄດ້ຮ່ວມກັນຈັດກອງປະຊຸມຜູ້ມີສ່ວນຮ່ວມຫຼາຍຝ່າຍ, ໂດຍມີສ່ວນຮ່ວມກັບນັກວິທະຍາສາດ ແລະ ນັກຄົ້ນຄວ້າຈາກ ລັດຖະບານ, ພະນັກງານສົ່ງເສີມ, ຜູ້ກໍານົດນະໂຍບາຍ ແລະ ຜູ້ໃຫ້ທຶນເພື່ອກໍານົດຂອບເຂດຂອງການຮ່ວມມື. ໃນນີ້ລວມມີ ການປັບປຸງການຜະລິດແນວພັນທີ່ດີ ແລະ ການທົດສອບ ແລະ ການສ້າງແບບຢ່າງການຮ່ວມມືພາກລັດ - ເອກະຊົນ ເພື່ອການເຜີຍແຜ່ເຕັກໂນໂລຢີດ້ານກະສິກໍາ. ຜົນໄດ້ຮັບຈາກກອງປະຊຸມ, ສົມທົບກັບການປ່ຽນແປງນະໂຍບາຍ, ໄດ້ແຈ້ງໃຫ້ຊາບເຖິງການພັດທະນາຍຸດທະສາດໃນການຄົ້ນຄວ້າ ແລະ ພັດທະນາເຂົ້າພາຍໃນປະເທດ.

ໃນເດືອນພຶດສະພາ 2017, ລັດຖະບານແຫ່ງ ສປປ ລາວ ແລະ IRRIໄດ້ລົງນາມໃນຂໍ້ຕົກລົງເປັນປະເທດເຈົ້າພາບເພື່ອສືບຕໍ່ ເພີ່ມ ທະວີການຮ່ວມມືເພື່ອສະໜັບສະໜູນໃນຂະແໜງການເຂົ້າໃນສປປລາວຕໍ່ໄປ.

## ຄວາມສຳເລັດການອະນຸລັກຄວາມຫຼາກຫຼາຍຂອງພັນທຸກຳເຂົ້າ

ສປປ ລາວ ໄດ້ມອບແນວພັນເຂົ້າ ຫຼາຍກວ່າ 15,000 ຊະນິດ - ຊຶ່ງເປັນປະເທດອັນດັບສອງທີ່ໃຫ້ການສະໜັບສະໜູນທາງດ້ານແນວພັນເຂົ້າ - ເພື່ອ ເກັບຮັກສາໄວ້ຢູ່ທະນາຄານແນວພັນເຂົ້າຂອງ ສະຖາບັນຄົ້ນຄວ້າເຂົ້ານາໆ ຊາດ(IRRI). ໃນທາງກັບກັນ, ສະຖາ ບັນຄົ້ນຄວ້າ ເຂົ້ານາໆຊາດ (IRRI) ກໍ່ໄດ້ສົ່ງມອບຕົວຢ່າງແນວພັນເຂົ້າຈຳນວນ 750 ຕົວຢ່າງໃຫ້ແກ່ ສປປ ລາວ ເພື່ອນຳໄປຂະຫຍາຍພັນ ແລະ ຄົ້ນຄວ້າ ເພີ່ມເຕີມ ແລະ ເກັບຮັກສາໄວ້ຫຼາຍ ກວ່າ 11,000 ຊະນິດ.

### ການພັດທະນາຄວາມອາດສາມາດ

ສະຖາບັນຄົ້ນຄວ້າເຂົ້ານາໆຊາດ(IRRI)ປະກອບສ່ວນໃນທຸກກິດຈະກຳກ່ຽວກັບການພັດທະນາຄວາມອາດສາມາດຮ່ວມກັບຫຼາຍຄູ່ຮ່ວມງານຢູ່ໃນ ສປປ ລາວ. ນັບຕັ້ງແຕ່ປີ 1968, ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI)ໄດ້ເປັນ ເຈົ້າພາບໃນການຈັດຝຶກອົບຮົມທາງ ດ້ານວິຊາການທີ່ມີຜູ້ ເຂົ້າຮ່ວມຫຼາຍ ກວ່າ 260 - ໃນນັ້ນມີ ແມ່ຍິງຈຳນວນ 40 ຄົນ - ມາຈາກ ສປປ ລາວ. ສະຖາບັນຄົ້ນຄວ້າເຂົ້ານາໆຊາດ(IRRI)ດ້ຊ່ວຍເຫຼືອສະຖາບັນໄຄົ້ນຄວ້າກະສິກຳ ປ່າໄມ້ ແລະ ພັດທະນາຊົນນະບົດ (NAFRI) ສ້າງຕັ້ງສູນຄົ້ນຄວ້າເຂົ້າ(RRC).

### ແນວພັນທີ່ໄດ້ຮັບການຍອມຮັບ ຈາກຊາວກະສິກອນ

ປີ 2004, ຊາວກະສິກອນລາວໄດ້ປູກແນວພັນເຂົ້າປັບປຸງໃໝ່ຫຼາຍກວ່າ 60% ເຊິ່ງເຄິ່ງໜຶ່ງຂອງແນວພັນດັ່ງກ່າວໄດ້ຮ່ວມພັດທະນາແນວພັນຮ່ວມກັບສະຖາບັນຄົ້ນຄວ້າເຂົ້ານາໆ ຊາດ (IRRI). ໃນປີ 2008, ຊາວກະສິກອນທີ່ປູກເຂົ້າຕາມທົ່ງພຽງຫຼາຍກວ່າ 80% ນຳໃຊ້ແນວພັນເຂົ້າໜຽວປັບ ປຸງໃໝ່.

### ການບໍລິຫານຈັດການແນວພັນທີ່ດີທີ່ສຸດ

ສະຖາບັນຄົ້ນຄວ້າເຂົ້ານາໆຊາດ(IRRI)ໄດ້ພັດທະນາ 07 ຂັ້ນຕອນໃນການບໍລິຫານຈັດການເຂົ້າໃນເຂດທົ່ງພຽງນ້ຳຝົນປະກອບມີ: ວິທີການເລືອກ ແນວພັນເຂົ້າ, ວິທີຜະລິດແນວພັນເຂົ້າທີ່ມີຄຸນນະພາບ, ການກະກຽມດິນ,ການບໍລິຫານຈັດການພືດພັນ ແລະ ເນື້ອທີ່ນາ, ວິທີການປະຕິບັດແລະ ເຕັກນິກຫຼັງເກັບກ່ຽວ.

### ພັດທະນາການຜະລິດເຂົ້າ

ດ້ວຍການສະໜັບສະໜູນຈາກສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ໃນ ການຄົ້ນຄວ້າ, ປັບປຸງແນວພັນເຂົ້າ ແລະ ການບໍລິຫານຈັດການພືດພັນ. ໃນປີ 1990 ຜົນຜະລິດເຂົ້າທັງໝົດຢູ່ ສປປ ລາວ ເພີ່ມຂຶ້ນຈາກ 1.5 ລ້ານ ໂຕນເປັນຫຼາຍກວ່າ 2 ລ້ານໂຕນໃນປີ 1999 ເຊິ່ງໃນຂະນະນັ້ນປະເທດສາມາດບັນລຸຄາດໝາຍການສະໜອງເຂົ້າທີ່ພຽງພໍ. ໃນປີ 2019 ຜົນຜະລິດເຂົ້າເພີ່ມຂຶ້ນເປັນ 3.5 ລ້ານໂຕນ.

## ການຮ່ວມມືໃນປັດຈຸບັນໂຄງການຜະລິດກະສິກຳເປັນສິນຄ້າ (LACP Project)

ເດືອນມັງກອນ ປີ 2020, ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ແລະ ກະຊວງກະສິກຳ ແລະ ປ່າໄມ້, ກົມແຜນການ ແລະ ການເງິນໄດ້ເຊັນຂໍ້ຕົກລົງ ເພື່ອຮ່ວມມືກັນເສີມຂະ ຫຍາຍຄວາມສາມາດໃນການແຂ່ງຂັນ ແລະ ຄວາມຍືນຍົງ ໃນວຽກງານຂະແໜງກະສິກຳຂອງປະເທດ(LACP Project).

ສະຖາບັນຄົ້ນຄວ້າເຂົ້ານາໆ (IRRI) ຈະສະໜັບສະໜູນລັດຖະ ບານປັບປຸງຕ່ອງໂສ້ເຂົ້າ,ນຳໃຊ້ວິທີການບໍລິຫານ ຈັດການ ທີ່ດີທີ່ສຸດ ແລະ ພັດທະນາຍຸດທະສາດການສົ່ງອອກສິນຄ້າໃນ 05 ເຂດຂອງໂຄງການປະກອບມີ ແຂວງບໍລິຄຳໄຊ, ຄຳມ່ວນ, ໄຊຍະບູລີ, ແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ.

### ປັບປຸງແນວພັນເຂົ້າທີ່ທົນທານຕໍ່ດິນເຄັມ

ໃນປັດຈຸບັນ, ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ຈັດຕັ້ງ ປະຕິບັດໂຄງການຮ່ວມມືກັບ ສປປ ລາວ ກ່ຽວກັບ ການທົດ ລອງ ແລະ ເຜີຍແຜ່ແນວພັນເຂົ້າທີ່ທົນທານຕໍ່ດິນເຄັມ.ໂຄງການດັ່ງກ່າວມີຈຸດປະສົງພັດທະນາຄູ່ມືຊາວກະສິກອນປູກເຂົ້າສຳລັບເຂດທີ່ໄດ້ຮັບຜົນກະທົບຈາກດິນເຄັມຢູ່ພາ ຍໃນປະເທດ

### ການຮ່ວມມືລະດັບພາກພື້ນ

ສປປ ລາວ ເປັນສະມາຊິກຫຼັກຂອງເຄືອຂ່າຍເຂົ້າ ASEAN RiceNet ເຮັດໃຫ້ສາມາດທົດລອງ ແລະ ເຜີຍແຜ່ແນວພັນ ເຂົ້າປັບປຸງລະຫວ່າງອາຊີຕາເວັນອອກສ່ຽງໃຕ້ໄດ້ຢ່າງວ່ອງໄວ.

### ການພັດທະນາແນວພັນ

ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ສືບຕໍ່ພັດທະນາແນວພັນເຂົ້າທີ່ທົນທົນຕໍ່ທຸກສະພາບທີ່ໃຫ້ຜົນຜະລິດທີ່ສູງ ແລະ ຕ້ອງເປັນເມັດພັນທີ່ມີຄຸນນະພາບ ເໝາະສົມສຳລັບ ລະບົບການເຮັດນາຢູ່ ສປປ ລາວ ບໍ່ວ່າຈະນາດຳ ຫຼື ນາຢອດ. ແນວພັນທ່າດອກຄຳ 1 ຖືກປັບປຸງໃຫ້ທົນທານຕໍ່ນ້ຳຖ້ວມ ແລະ ກາຍມາເປັນແນວພັນເຊບັ້ງໄຟ 1. ແນວພັນນີ້ເໝາະສົມທີ່ຈະປູກໃນເຂດທົ່ງພຽງທີ່ມີຄວາມສ່ຽງນ້ຳຖ້ວມພາຍໃນ ປະເທດ.

### ວິທີການປະຕິບັດ ແລະ ເຕັກນິກຫຼັງເກັບກ່ຽວ

ນັບຕັ້ງແຕ່ປີ 2006 ເປັນຕົ້ນມາ ສະຖາບັນຄົ້ນຄວ້າເຂົ້ານາໆ ຊາດ (IRRI) ໄດ້ນຳສະເໜີເຕັກນິກຕ່າງໆພາຍໃນປະເທດ ປະກອບມີລະບົບການຈັດເກັບແບບປິດບໍ່ໃຫ້ມີລົມຜ່ານໄດ້ ແລະ ການນຳໃຊ້ເຄື່ອງຫຼຸດຄວາມຊື້ນທີ່ຜະລິດເອງໂດຍ ຜູ້ຜະລິດທ້ອງຖິ່ນ ແລະ ຍັງນຳສະເໜີລະບົບປັບລະດັບໜ້າດິນໂດຍເລເຊີ ແລະ ນຳເຂົ້າເຄື່ອງມືນວດ ເຂົ້າຂະໜາດ ນ້ອຍໃຫ້ແກ່ສູນຄົ້ນຄວ້າຢູ່ແຂວງສະຫວັນນະເຂດແລະ ເຮັດວຽກຮ່ວມກັບໂຮງສີເຂົ້າຈຳນວນ 04 ແຫ່ງເພື່ອປັບປຸງ ໂຮງສີເຂົ້າໃຫ້ແປຮູບເຂົ້າໃຫ້ເປັນເຂົ້າອິນຊີ.

### ການແລກປ່ຽນຄວາມຮູ້ຂອງຊາວກະສິກອນ

ສະຖາບັນຄົ້ນຄວ້າເຂົ້ານາໆຊາດ(IRRI)ໄດ້ຈັດຝຶກອົບຮົມກ່ຽວກັບບ້ານທີ່ມີຄວາມຊຳນານກ່ຽວກັບການປ່ຽນດິນຟ້າອາກາດຢູ່ບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ປະກອບມີ ສປປ ລາວ ເພື່ອເປັນການສົ່ງເສີມຖານການແລກ ປ່ຽນຄວາມຮູ້ ພາຍໃນຊຸມຊົນລະຫວ່າງບຸກຄົນ ແລະ ກຸ່ມຊາວກະສິກອນກ່ຽວກັບລະບົບເມັດພັນເຂົ້າ ແລະ ວິທີການຜະລິດກະສິກຳ ທີ່ແທດເໝາະຕໍ່ການປ່ຽນແປງດິນຟ້າອາກາດ ແລະ ປະສົບການຂອງຊາວກະສິກອນ.




**CONTACT**

**Yurdi Yasmi**
Regional Representative for Southeast Asia
y.yasmi@irri.org

**Siriphone Chanthala**
Senior Officer- Administrative Coordination
s.chanthala@irri.org

**IRRI Headquarters** (Philippines)
+63 2 580 5600
info@irri.org


International Rice Research Institute

ສະຖາບັນຄົ້ນຄວ້າເຂົ້ານາໆຊາດ (IRRI) ມີຈຸດປະສົງເພື່ອ ປັບ ປຸງ ຊີວິດການເປັນຢູ່ ແລະ ໂພສະນາການ, ລຶບລ້າງຄວາມ ທຸກຍາກ, ຄວາມຫິວ ແລະ ການຂາດສານອາຫານຂອງ ຜູ້ທີ່ອີງໃສ່ເຂົ້າເປັນອາຫານຫຼັກ. ເພື່ອຈັດຕັ້ງປະຕິບັດ ວຽກ ງານເຫຼົ່ານັ້ນ, ເນັ້ນໃສ່ປົກປັກສຸຂະພາບ ແລະ ຜູ້ບໍລິໂພກ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມຂອງການປູກເຂົ້າທົ່ວໂລກທີ່ມີການປ່ຽນແປງຂອງດິນຟ້າອາກາດເປັນສິ່ງທ້າທາຍ, ທັງສຸມໃສ່ສົ່ງເສີມຄວາມອາດສາມາດຂອງແມ່ຍິງ ແລະ ສະໜັບສະໜູນການໃຫ້ໂອກາດແກ່ໄວໜຸ່ມໃຫ້ສາມາດເຂົ້າເຖິງອາຫານໄດ້ຢ່າງເທົ່າທຽມກັນ.

ເດືອນມິຖຸນາ ປີ 2020